ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເຜີຍແຜ່ກົດໝາຍໃຫ້ແກ່ ທະນາຄານການຄ້າຕ່າງປະເທດລາວມະຫາຊົນ.



ໃນຕອນເຊົ້າຂອງ ວັນທີ 27 ເມສາ 2019, ກົມນິຕິກຳ ແລະ ກົມຄຸ້ມຄອງລະບົບການຊຳລະສະສາງ, ທະນາຄານແຫ່ງ ສປປ ລາວ ຮ່ວມກັບທະນາຄານການຄ້າຕ່າງປະເທດລາວໄດ້ຈັດກອງປະຊຸມເຜີຍແຜ່ກົດໝາຍໃຫ້ແກ່ພະນັກງານທະນາຄານຄ້າຕ່າງປະເທດລາວມະຫາຊົນທີ່ສະໂມສອນສະຖາບັນການທະນາຄານ. ໂດຍການເຂົ້າຮ່ວມຂອງ ທ່ານ ບົວວັນ ສີມະນີວົງ ຮອງຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ ແລະ ທ່ານ ປອ. ເວີນສະຫ້ອນ ສີວິໄຊ ຮອງຫົວໜ້າກົມນິຕິກຳ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 618 ທ່ານ.

ກົດໝາຍທີ່ນຳມາເຜີຍແຜ່ໃນກອງປະຊຸມຄັ້ງນີ້ແມ່ນກົດໝາຍວ່າດ້ວຍ ທຫລ (ສະບັບປັບປຸງ) ຊຶ່ງໄດ້ເອົາເນື້ອໃນ ແລະ ມາດຕາທີ່ສຳຄັນເປັນຕົ້ນແມ່ນ: ໂຄງປະກອບຂອງກົດໝາຍ, ທີ່ຕັ້ງ ແລະ ພາລະບົດບາດ, ໂຄງປະກອບການຈັດຕັ້ງ, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທຫລ, ໂຄງປະກອບຂອງສະພາບໍລິຫານ, ສິດ ແລະ ໜ້າທີ່ຂອງສະພາບໍລິຫານ, ສິດ ແລະ ໜ້າທີ່ຂອງຜູ້ວ່າການ, ຮອງຜູ້ວ່າການ ແລະ ເນື້ອໃນອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ. ສ່ວນກົດໝາຍວ່າດ້ວຍລະບົບການຊຳລະ ກໍເປັນອີກກົດໝາຍໜຶ່ງທີ່ໄດ້ຮັບການສ້າງຂຶ້ນໃໝ່ ຊຶ່ງໄດ້ຄັດຈ້ອນເອົາເນື້ອໃນສຳຄັນຂອງກົດໝາຍ ເຊັ່ນ: ຈຸດປະສົງ, ໂຄງປະກອບຂອງກົດໝາຍ, ຄວາມໝາຍຂອງລະບົບຊຳລະເຄື່ອງມືການຊຳລະ, ຜູ້ຄວບຄຸມລະບົບການຊຳລະ, ເງື່ອນໄຂການເປັນຜູ້ຄວບຄຸມລະບົບການຊຳລະ, ສິດ ແລະ ພັນທະຂອງຜູ້ຄວບຄຸມຜູ້ໃຫ້ບໍລິການ, ຜູ້ນຳໃຊ້ບໍລິການ, ການຂໍອະນຸຍາດໃນການດຳເນີນທຸລະກິດຊຳລະ ແລະ ອີກຫຼາຍໆເນື້ອໃນທີ່ກຳນົດໄວ້ໃນກົດໝາຍ. ພ້ອມນີ້ ກໍເພື່ອສ້າງຄວາມຮູ້, ຄວາມເຂົ້າໃຈກ່ຽວກັບບັນດາກົດໝາຍໃຫ້ແກ່ພະນັກງານທະນາຄານການຄ້າຕ່າງປະເທດລາວ ເພື່ອນຳໄປຈັດຕັ້ງປະຕິບັດວຽກງານໃຫ້ຖືກຕ້ອງ, ສອດຄ່ອງ ແລະ ເປັນເອກະພາບກັນ.





ພາຍຫຼັງໄດ້ຮັບການເຜີຍແຜ່ເອກະສານແລ້ວ ຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ມີຄໍາຖາມແລກປ່ຽນ, ສົນທະນາບາງບັນຫາທີ່ເຫັນວ່າ ບໍ່ທັນຈະແຈ້ງ ແລະ ບໍ່ທັນເອກະພາບກັນໃນເວລາຈັດຕັ້ງປະຕິບັດຕົວຈິງ.

**# ຂ່າວໂດຍ: ນ.ພອນສະນິດ ພິຈິດ (ກົມນິຕິກໍາ ທຫລ)**

**ພາບ: ນ. ຄໍາເບົ້າ ສຸວໍລະວົງ (ກົມນິຕິກໍາ ທຫລ)**

# ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ